# ບົດລາຍງານ

ຜົນການຄົ້ນພົບເບື້ອງຕົ້ນ

## ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ (ສື່ສັງຄົມອອນລາຍ) ໃນ ສປປ ລາວ



ທັນວາ 2023

UNFPA

# ດ້ານວິຊາການ

ບຸກຄົນໃນພາບບໍ່ມີສ່ວນກ່ຽວຂ້ອງກັບຄວາມຮຸນແຮງທາງອອນລາຍແຕ່ຢ່າງໃດ

ເອກະສານສະບັບນີ້ ຜະລິດໂດຍອົງການ UNFPA ປະຈໍາ ສປປ ລາວ, ພາຍໃຕ້ການນໍາພາທາງດ້ານວິຊາການຂອງ ທ່ານ ນາງ ວິກຕໍເລຍ ດາດ, ຊ່ຽວຊານ GBV, ຄວບຄຸມໂດຍ ທ່ານ ນາງ ສີສຸວັນ ວໍລະບຸດ, ຫົວໜ້າໂຄງການບົດບາດຍິງຊາຍ ແລະ GBV.

ອົງການສະຫະປະຊາຊາດກອງທຶນ ສໍາລັບປະຊາກອນ (UNFPA): ແມ່ນອົງການສະຫະປະຊາຊາດກອງທຶນ ສໍາລັບປະຊາກອນ ທີ່ເຮັດວຽກຢູ່ໃນຫຼາຍກວ່າ 150 ປະເທດ ລວມທັງ ສປປ ລາວ, ເພື່ອບັນລຸເປົ້າໝາຍເຮັດໃຫ້ການເສຍຊີວິດຂອງແມ່ເປັນສູນ, ການບໍ່ຕອບສະໜອງຕໍ່ຄວາມຕ້ອງການສໍາລັບການວາງແຜນຄອບຄົວເປັນສູນ ແລະ ເຮັດໃຫ້ຄວາມຮຸນແຮງບົນພື້ນຖານທາງເພດເປັນສູນ.

ບົດລາຍງານຜົນການສໍາຫຼວດສະບັບນີ້ ໄດ້ຮັບຜົນສໍາເລັດດ້ວຍດີໂດຍການຮ່ວມມືຈາກ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. UNFPA ຂໍສະແດງຄວາມຮູ້ບຸນຄຸນມາຍັງຄະນະນໍາ ຄະນະສຶກສາສາດ ພ້ອມດ້ວຍທີມງານ ທີ່ໄດ້ເອົາໃຈໃສ່ ແລະ ປະກອບສ່ວນຢ່າງຕັ້ງໜ້າໃນເກືອບທຸກຂະບວນການ ເຊັ່ນ: ການເອື້ອອໍານວຍໃນການເກັບກໍາຂໍ້ມູນ, ການທົບທວນດ້ານເນື້ອໃນຜົນການສໍາຫຼວດເບື້ອງຕົ້ນ ແລະ ປະກອບຄໍາເຫັນຢ່າງກົງໄປກົງມາ, ເຊິ່ງເຮັດໃຫ້ບົດລາຍງານສະບັບນີ້ ຄົບຖ້ວນ ແລະ ສົມບູນຫຼາຍຂຶ້ນ.

ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່: laos.office@unfpa.org

ທ່ານສາມາດເຂົ້າເບິ່ງເວັບໄຊທ໌ UNFPA ສປປ ລາວ ໄດ້ທີ່: https://lao.unfpa.org/en

ຮູບພາບ: ອົງການ UNFPA ສປປ ລາວ

ຜູ້ອອກແບບປຶ້ມຄູ່ມື: ສຸວັນນະໄຊ ຈັນທະສະຫວັດ

# ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ (ສື່ສັງຄົມອອນລາຍ) ໃນ ສປປ ລາວ

## ພາກສະເໜີ

ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ (TF GBV) ໄດ້ກາຍເປັນບັນຫາທີ່ມີຄວາມກັງວົນຢ່າງຫຼວງຫຼາຍໃນທົ່ວໂລກ ແລະໃນພາກພື້ນ. ໃນທົ່ວໂລກ, ແມ່ຍິງ 38% ໄດ້ປະສົບກັບຄວາມຮຸນແຮງທາງອອນລາຍ ແລະ ແມ່ຍິງ 85% ໄດ້ພົບເຫັນຄວາມຮຸນແຮງທາງອອນລາຍ ທີ່ເກີດຂຶ້ນກັບແມ່ຍິງອື່ນໆ[1] . ໃນອາຊີປາຊີຟິກ, ແມ່ຍິງ 80% ໄດ້ປະສົບພົບພໍ້ , ໄດ້ຍິນກ່ຽວກັບ ຫຼື ມີປະສົບການຄວາມຮຸນແຮງດ້ວຍຕົນເອງ.

## ຄວາມເປັນມາ

ໃນ ສປປ ລາວ, ຂໍ້ມູນກ່ຽວກັບ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຍັງມີຈຳກັດ, ເຖິງແນວໃດກໍ່ຕາມ, ກໍລະນີຂອງ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີກໍໄດ້ຖືກລາຍງານ. ໜຶ່ງໃນເປົ້າໝາຍຂອງແຜນດຳເນີນງານວ່າດ້ວຍການປ້ອງກັນ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ເດັກ ໄລຍະ 2 (2021-2025) ແມ່ນເພື່ອປົກປ້ອງ ແລະ ໂຕ້ຕອບຕໍ່ທຸກຄວາມຮຸນແຮງ: ຄວາມຮຸນແຮງທາງສື່ອອນລາຍ, ການຄຸກຄາມ ແລະ ການລ່ວງລະເມີດທາງເພດຕໍ່ເດັກຜ່ານທາງອອນລາຍ. ເພື່ອເປັນການສ້າງຄວາມເຂົ້າໃຈຕໍ່ກັບບັນຫາດັ່ງກ່າວ ແລະ ພຶດຕິກຳການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຜ່ານຊ່ອງທາງອອນລາຍ ໃນ ສປປ ລາວ, ອົງການ UNFPA ແລະ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ຈຶ່ງໄດ້ຮ່ວມມືກັນດຳເນີນການສົນທະນາກຸ່ມ ກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີກັບ ໄວໜຸ່ມທັງຊາຍ ແລະ ຍິງ, ແລະ ບຸກຄົນທີ່ມີຄວາມຫຼາກຫຼາຍທາງເພດ (LGBTIQA+), ເຊັ່ນດຽວກັນກັບການສຳພາດຜູ້ໃຫ້ຂໍ້ມູນຫຼັກ (KII) ໂດຍການຮ່ວມມືກັບສະຫະພັນແມ່ຍິງລາວ ແລະ ໜ່ວຍງານທີ່ຮັບຜິດຊອບວຽກງານດັ່ງກ່າວ. ຜູ້ເຂົ້າຮ່ວມສົນທະນາກຸ່ມລວມມີ: ກຸ່ມ ເພດຊາຍ ແລະ ຍິງທີ່ມີອາຍຸແຕກຕ່າງກັນ, ກຸ່ມທີ່ມາຈາກຊົນເຜົ່າທີ່ແຕກຕ່າງກັນ, ກຸ່ມຄົນທົ່ວໄປ, ຜູ້ມີຄວາມບົກຜ່ອງທາງດ້ານຮ່າງກາຍ ແລະ ກຸ່ມທີ່ມີຄວາມຫຼາກຫຼາຍທາງເພດ. ຂໍ້ມູນສ່ວນຕົວກ່ຽວກັບຜູ້ໃຫ້ຂໍ້ມູນຫຼັກ ທີ່ໄດ້ເຂົ້າຮ່ວມການສົນທະນາກຸ່ມໃນຄັ້ງນີ້ ແມ່ນໄດ້ຖືກຮັກສາເປັນຄວາມລັບ ແລະ ຖືກຮັບປະກັນດ້ານຄວາມປອດໄພ.

## ຈຸດປະສົງ ແລະ ຜົນຄາດວ່າຈະໄດ້ຮັບ

ເນື່ອງຈາກຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ (ສື່ສັງຄົມອອນລາຍ) ໄດ້ເພີ່ມຂຶ້ນໃນທົ່ວໂລກ, ໃນພາກພື້ນ ຫຼື ບັນດາປະເທດໃກ້ຄຽງກໍ່ໄດ້ດຳເນີນການສຶກສາ, ແຕ່ໃນ ສປປ ລາວ ແມ່ນຫຍັງມີຂໍ້ມູນທີ່ເປັນທາງການກ່ຽວກັບບັນຫາດັ່ງກ່າວ. ຈຸດປະສົງຂອງການຄົ້ນຄວ້າເບື້ອງຕົ້ນນີ້ເພື່ອ ສະແດງໃຫ້ເຫັນລັກສະນະທາງທຳມະຊາດ, ຄວາມຮຸນແຮງ, ຜົນກະທົບ ແລະ ພຶດຕິກຳການຂໍຊ່ວຍເຫຼືອຄົນລາວທີ່ກ່ຽວຂ້ອງກັບບັນຫານີ້.

ຄາດວ່າຈະໄດ້ຂໍ້ມູນໃນເບື້ອງຕົ້ນກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ, ເພື່ອເປັນບ່ອນອີງໃນການຄົ້ນຄວ້າເພີ່ມຕື່ມໃນອະນາຄົດ ໃນການຫາຫຼັກຖານທີ່ເປັນຮູບປະທຳ ແລະ ການເກັບກຳຂໍ້ມູນແມ່ນຈະໄດ້ອີງໃສ່ຕາມຜົນການຄົ້ນຄວ້າຄັ້ງນີ້ ເຊັ່ນດຽວກັນກັບກະຕຸ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ (ລັດຖະບານ), ຄູ່ຮ່ວມພັດທະນາ ແລະ ສັງຄົມໃຫ້ຄວາມສຳຄັນກ່ຽວກັບການລົງທຶນ ແລະ ການຂະຫຍາຍຕົວຕໍ່ບັນຫາດັ່ງກ່າວ

## ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີແມ່ນຫຍັງ?

ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ (TF GBV) ໝາຍເຖິງ *"ການກໍ່ຄວາມຮຸນແຮງທີ່ກະທຳໂດຍບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ , ລວມທັງການຊໍ້າເຕີມ ແລະ ນຳຂໍ້ມູນໄປເຜີຍແຜ່ ໂດຍການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ ຫຼື ສື່ດີຈີຕອລຕໍ່ກັບບຸກຄົນບົນພື້ນຖານທາງເພດຂອງເຂົາເຈົ້າ."* [2]

ຄຳວ່າ "ຄວາມຮຸນແຮງທາງດີຈີຕອລ", "ຄວາມຮຸນແຮງທາງໄຊເບີ້ (ອິນເຕີເນັດ)" ແລະ "ຄວາມຮຸນແຮງທາງອອນລາຍ" ຍັງຖືກໃຊ້ແທນກັນເລື້ອຍໆ. ຢ່າງໃດກໍຕາມ, ຄຳເຫຼົ່ານີ້ບໍ່ໄດ້ກວມເອົາຄຸນລັກສະນະ ຫຼື ຂອບເຂດຂອງຄວາມຮຸນແຮງທາງເພດໂດຍການນຳໃຊ້ເຕັກໂນໂລຊີທັງໝົດ.

1 ໜ່ວຍງານອັດສະລິຍະທາງເສດຖະກິດ, "ການວັດແທກຄວາມແຜ່ຫຼາຍຂອງຄວາມຮຸນແຮງທາງອອນລາຍຕໍ່ແມ່ຍິງ", ປີ 2021.

2 ອົງການ UNFPA, ຄວາມຮຸນແຮງທາງອອນ ລາຍ ທີ່ມີພື້ນຖານທາງເພດ: ການສ້າງທຸກໆພື້ນທີ່ໃຫ້ປອດໄພ (2021). ເບິ່ງໄດ້ທີ່: https://www.unfpa.org/publications/technology-facilitated-gender-based-violence-making-all-spaces-safe

## ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີເກີດຂຶ້ນໄດ້ແນວໃດ?

ຢູ່ໃນ ສປປ ລາວ ແມ່ຍິງປະມານ 1 ໃນ 3 ຄົນ ມີຄວາມສຳພັນແບບຄູ່ຮັກ ແລະ ໄດ້ປະສົບກັບຄວາມຮຸນແຮງ (ທາງກາຍ, ທາງເພດ ແລະ ຈິດໃຈ)[3], ເນື່ອງຈາກໂລກຍັງສືບຕໍ່ພັດທະນາ,ການນຳໃຊ້ເຕັກໂນໂລຊີ ແລະ ພື້ນທີ່ໃນໂລກອອນລາຍຫຼາຍຂຶ້ນ, ການຂະຫຍາຍຕົວຂອງ ພື້ນທີ່ ຄວາມຮຸນແຮງສາມາດເກີດຂຶ້ນໄດ້ເຊັ່ນກັນ.

ຄວາມຮຸນແຮງບົນພື້ນຖານຄຸນລັກສະນະທາງເພດທີ່ໃຊ້ເຕັກໂນໂລຊີອຳນວຍຄວາມສະດວກ ມີລັກສະນະຄືກັບຄວາມຮຸນແຮງບົນພື້ນຖານທາງເພດອື່ນໆ:

» ເກີດຂຶ້ນໃນທຸກສັງຄົມທົ່ວໂລກ

» ມີສາເຫດມາຈາກເພດພາວະ (*Gender*) ແລະ ມີຮາກຖານຢູ່ໃນຄວາມບໍ່ສະເໝີພາບທາງເພດ, ສົ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກຍິງຢ່າງບໍ່ສົມເຫດສົມຜົນໃນທຸກຄວາມຫຼາກຫຼາຍ.

» ມັນສາມາດສົ່ງຜົນກະທົບຮ້າຍແຮງຕໍ່ສຸຂະພາບ, ຄວາມເປັນຢູ່ ແລະຊີວິດຂອງຜູ້ລອດຊີວິດ.

ຄວາມຮຸນແຮງບົນພື້ນຖານຄຸນລັກສະນະທາງເພດທີ່ໃຊ້ເຕັກໂນໂລຊີອຳນວຍຄວາມສະດວກ ມີລັກສະນະຄືກັບຄວາມຮຸນແຮງບົນພື້ນຖານທາງເພດອື່ນໆ:

» ເກີດຂຶ້ນໃນທຸກສັງຄົມທົ່ວໂລກ

» ມີສາເຫດມາຈາກເພດພາວະ (*Gender*) ແລະ ມີຮາກຖານຢູ່ໃນຄວາມບໍ່ສະເໝີພາບທາງເພດ, ສົ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກຍິງຢ່າງບໍ່ສົມເຫດສົມຜົນໃນທຸກຄວາມຫຼາກຫຼາຍ.

» ມັນສາມາດສົ່ງຜົນກະທົບຮ້າຍແຮງຕໍ່ສຸຂະພາບ, ຄວາມເປັນຢູ່ ແລະຊີວິດຂອງຜູ້ລອດຊີວິດ.

ຢ່າງໃດກໍຕາມ, ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີແມ່ນມີລັກສະນະສະເພາະ, ດັ່ງນີ້:

» ບໍ່ເປີດເຜີຍຊື່

» ກະທຳຄວາມຜິດໃນໄລຍະໄກ

» ແຜ່ຂະຫຍາຍໄດ້ງ່າຍໂດຍຜ່ານອິນເຕີເນັດ

» ອັດຕະໂນມັດ

» ມີຢູ່ຕະຫຼອດໄປ

» ກະທຳຜິດທີ່ນຳ ຫຼື ຕິດຕາຕົວໄດ້ຢາກ

ການແກ້ໄຂ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ, ເປັນຂໍ້ກັງວົນທີ່ສຳຄັນ ແລະ ຂະຫຍາຍໃນວົງກວ້າງທີ່ບໍ່ສາມາດເຈລະຈາຕໍ່ລອງ ຫຼື ຄວບຄຸມໄດ້.

## ສະຫຼຸບຜົນການຄົ້ນພົບ

ການຄົ້ນພົບສະແດງໃຫ້ເຫັນວ່າສ່ວນຫຼາຍແລ້ວຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ແມ່ນ ມັກຈະເກີດຂຶ້ນກັບ ເພດຍິງ, ໄວໜຸ່ມຍິງ ແລະ ເພດຍິງໄວກາງຄົນ ເຊິ່ງຈະຕົກເປັນເປົ້າຂອງການໃຊ້ຄວາມຮຸນແຮງດັ່ງກ່າວ. ຜູ້ທີ່ລັກສະນະສະເພາະກໍ່ມີຄວາມສ່ຽງສູງເຊັ່ນກັນ ລວມມີ ເພດຍິງທີ່ມີຄວາມບົກພ່ອງທາງດ້ານຮ່າງກາຍ(ພິການ), ກຸ່ມທີ່ມີຄວາມຫຼາກຫຼາຍທາງເພດ, ກຸ່ມຊົນເຜົ່າ, ຜູ້ມີລາຍໄດ້ຕ່ຳ ແລະ ຜູ້ຍິງທີ່ເຮັດວຽກເຄື່ອນທີ່, ພ້ອມນີ້ ຜູ້ຍິງທີ່ເຮັດວຽກບໍລິການສັງຄົມກໍ່ໄດ້ຖືກຜົນກະທົບຢ່າງບໍ່ເໝາະສົມເຊັ່ນກັນ. ເຖິງຢ່າງໃດກໍ່ຕາມ, ຜົນການຄົ້ນພົບຍັງສະແດງໃຫ້ເຫັນຕື່ມວ່າ ເພດຊາຍກໍ່ສາມາດຕົກເປັນເປົ້າໝາຍຂອງຄວາມຮຸນແຮງດັ່ງກ່າວໄດ້ເຊັ່ນກັນ ໂດຍສະເພາະແມ່ນຜູ້ຊາຍຊົນເຜົ່າ, ຜູ້ຊາຍທີ່ມີລັກສະນະສະເພາະ, ມີຄວາມຫຼາກຫຼາຍທາງເພດ ຫຼື ຜູ້ຊາຍທີ່ບໍ່ໄດ້ເປັນໄປຕາມຄວາມຄາດຫວັງຂອງສັງຄົມທີ່ກຳນົດໄວ້ວ່າ ຄວນມີລັກສະນະແນວໃດ ແລະ ປະພຶດຕົວແນວໃດ

3 ການສຳຫຼວດແຫ່ງຊາດກ່ຽວກັບສຸຂະພາບ ແລະປະສົບການຊີວິດຂອງແມ່ຍິງ 2014 - ການສຶກສາກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ.

ການຄົ້ນພົບເບື້ອງຕົ້ນພົບວ່າ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ມັກຈະເກີດຂຶ້ນຢ່າງຕໍ່ເນື່ອງ ເຊິ່ງການກະທຳທີ່ເລີ່ມຕົ້ນໃນຊ່ອງທາງອອນລາຍ ອາດຈະນຳໄປສູ່ການລ່ວງລະເມີດທາງເພດ ແບບເຊິ່ງໜ້າ (ອອບໄລນ໌) ແລະ ແບບເຊິ່ງໜ້າໄປສູ່ແບບອອນລາຍ. ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ສ່ວນຫຼາຍແລ້ວມັກຈະກະທຳໂດຍຜູ້ຊາຍຄົນລາວ ແລະ ຕ່າງປະເທດ ເຊິ່ງຈະມີຜົນກະທົບຫຼາຍຕໍ່ກັບຜູ້ຖືກເຄາະຮ້າຍນັ້ນ. ສິ່ງທີ່ໜ້າກັງວົນທີ່ສຸດຄືການໃຊ້ສື່ສັງຄົມອອນລາຍໃນການຈັດຫາການບໍລິການທາງເພດ ແລະ ການຄ້າມະນຸດ, ການໃຊ້ຮູບພາບໃນທາງທີ່ຜິດ, ພຶດຕິກຳການຄວບຄຸມ ແລະ ຕິດຕາມຄູ່ຮັກ ແລະ ໝົກມຸ້ນຢູ່ກັບໂລກໄຊເບີ້ (ອອນລາຍ)
ຜູ້ນຳໃຊ້ເຕັກໂນໂລຊີສ່ວນໃຫຍ່ຫຍັງບໍ່ຮູ້ວ່າມີກົດໝາຍ ແລະ ອົງກອນຮັບຜິດຊອບທີ່ສາມາດຊ່ວຍເຂົາເຈົ້າໄດ້ໃນ ສປປ ລາວ, ຜູ້ທີ່ປະສົບກັບ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ສາມາດຂໍຄວາມຊ່ວຍເຫຼືອໄດ້ແທນທີ່ຈະຕອບໂຕ້ດ້ວຍໂຕຂອງເຂົາເຈົ້າເອງເຊັ່ນ: ການລຶບຄຳຄິດເຫັນ ຫຼື ບ້ອກບັນຊີ ແລະ ການຂໍຄວາມຊ່ວຍເຫຼືອຈາກຄອບຄົວ ແລະ ໝູ່ເພື່ອນ

## ຜົນກະທົບຈາກຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ແມ່ນຫຍັງ?

ຜົນກະທົບຈາກຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ແມ່ນການລະເມີດຄວາມເປັນສ່ວນຕົວ, ກຽດສັກສີ, ຄວາມເປັນອິດສະຫຼະ ແລະສິດທິຂອງບຸກຄົນ. ຜົນກະທົບຂອງ ຄວາມຮຸນແຮງນີ້ ມີຄວາມຮ້າຍແຮງຄືກັນກັບ ຄວາມຮຸນແຮງທາງຮ່າງກາຍ ແລະ ຈິດໃຈ ເຊັ່ນດຽວກັນກັບຮູບແບບອື່ນໆ, ແຕ່ ອົງການຈັດຕັ້ງຕ່າງໆ ຫຼືຜູ້ຖືກເຄາະຮ້າຍ-ຜູ້ລອດຊີວິດ ບໍ່ຄ່ອຍ ຮັບຮູ້ວ່າມີຄວາມຮຸນແຮງ.

ໃນ ສປປ ລາວ, ຜົນກະທົບ ແລະ ຜົນສະທ້ອນ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ຕໍ່ຜູ້ຖືກເຄາະຮ້າຍ ລວມມີ ຄວາມຮູ້ສຶກວິຕົກກັງວົນ, ຄວາມບໍ່ສະບາຍໃຈ, ແລະ ຄວາມຮູ້ສຶກບໍ່ປອດໄພ, ຈົນເຖິງຜົນກະທົບອັນໃຫຍ່ຫຼວງ ແລະ ໄລຍະຍາວຕໍ່ສຸຂະພາບກາຍ ແລະ ໃຈ. ຄວາມຮູ້ສຶກເຫຼົ່ານີ້ບໍ່ໄດ້ຖືກຈຳກັດຢູ່ໃນຂອບເຂດອອນລາຍ, ແຕ່ຍັງສົ່ງຜົນກະທົບຕໍ່ "ຊີວິດຈິງ" ຂອງເຂົາເຈົ້າເຊັ່ນກັນ.

ຜົນກະທົບທາງດ້ານສັງຄົມໃນ ສປປ ລາວ ລວມມີ ການແຍກຕົວອອກຈາກສັງຄົມ, ຫຼຸດຜ່ອນການເຂົ້າໄປມີສ່ວນຮ່ວມໃນໂລກອອນລາຍ (ການປົກປິດຕົນເອງ), ຄວາມເສຍຫາຍຕໍ່ຊື່ສຽງ ແລະ ມີຄວາມກັງວົນຢ່າງຕໍ່ເນື່ອງ ກ່ຽວກັບຊື່ສຽງ ຫຼືວ່າ ຜູ້ອື່ນຈະຮັບຮູ້ກ່ຽວກັບຕົວເຂົາເຈົ້າຄືແນວໃດ. ນອກຈາກນີ້, ຜົນກະທົບທາງດ້ານສັງຄົມ ຍັງນຳໄປສູ່ ການບົບບັງຄັບໃຫ້ແຕ່ງງານ ແລະ ມີຄວາມສຳພັນແບບຊູ້ສາວ. ຈາກການຄົ້ນຄວ້າຈາກຫຼາຍປະເທດ ພົບວ່າບັນຫາດັ່ງກ່າວຍັງສົ່ງຜົນກະທົບໃນວົງກວ້າງຕໍ່ສັງຄົມ ແລະ ເສດຖະກິດ ລວມເຖິງການສູນເສຍວຽກເຮັດງານທຳ, ຜົນລະລິດທີ່ຫຼຸດລົງ, ລາຍຈ່າຍທາງດ້ານສຸຂະພາບ, ກົດໝາຍ, ແລະ ສັງຄົມເພີ່ມຂຶ້ນ ພ້ອມທັງເຮັດໃຫ້ມີຄວາມບໍ່ສະເໝີພາບທາງສັງຄົມ ລະຫວ່າງຍິງ-ຊາຍ ແລະກຸ່ມທີ່ມີຄວາມສ່ຽງຫຼາຍຂຶ້ນ.



## ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີ ປະເພດໃດແດ່ທີ່ເກີດຂຶ້ນໃນລາວ?

| | ປະເພດ | ພຶດຕິກໍາ | ຜູ້ກະທໍາຜິດ / ການກໍາເນີດ ເປົ້າໝາຍ | ປະສົບການ/ເຫດການ |
|---|---|---|---|---|
| ການສອດແນມທາງໄຊເບີ້ (Cyberobsessional pursuit) | *ການຄຸກຄາມທາງເພດຜ່ານຊ່ອງທາງອອນລາຍ* | ການໃຊ້ເຕັກໂນໂລຊີເພື່ອຕິດຕໍ່, ຂົ່ມຂູ່ ຫຼື ເຮັດໃຫ້ຄົນອື່ນຢ້ານກົວແບບຊໍ້າໆ ການໃຊ້ເຕັກໂນໂລຊີເພື່ອສອດແນມ ຫຼື ຕິດຕາມ ກິດຈະກໍາ, ສະຖານທີ່ ຫຼື ພຶດຕິກໍາ ຂອງຄູ່ຮັກ | **ຜູ້ກະທໍາຜິດ ລວມທັງຄົນລາວ ແລະ ຕ່າງປະເທດ** ແນ່ໃສ ເປົ້າໝາຍທີ່ເປັນຍິງສາວ ແລະ ຄູ່ຮັກຂອງເຂົາເຈົ້າສໍາພັນແບບ ຊູ້ສາວ | *"ຂ້ອຍໄດ້ຮັບຂໍ້ຄວາມແບບສຸ່ມຫຼາຍຄັ້ງຈາກຄົນແປກໜ້າທາງເຟສບຸກ ທີ່ນັດພົບຂ້ອຍແບບຊູ້ສາວເຖິງວ່າຂ້ອຍບໍ່ໄດ້ຕອບ ແລະບໍ່ສົນໃຈ, ພວກເຂົາກໍຍັງສືບຕໍ່ສົ່ງຂໍ້ຄວາມໃຫ້ຂ້ອຍ."* |
| ການສອດແນມທາງໄຊເບີ້ (Cyberobsessional pursuit) | *ການຕິດຕາມທາງໄຊເບີ້* | ການນໍາໃຊ້ເຕັກໂນໂລຊີເພື່ອ ຕິດຕໍ່ ແລະ ຕິດຕາມ ພຶດຕິກໍາ ການເຄື່ອນໄຫວຂອງເພດກົງກັນຂ້າມ | **ຜູ້ກະທໍາຜິດ** ພະຍາຍາມຊັກຊວນ ເປົ້າໝາຍເພດກົງກັນຂ້າມ ໃຫ້ມີ ຄວາມສໍາພັນໃນທາງຊູ້ສາວ | *"ແຟນຂອງໝູ່ຂ້ອຍ ໄດ້ ພະຍາຍາມຕິດຕາມນາງທົ່ວທຸກບ່ອນ ແລະ ຖ່າຍຮູບຂອງນາງ ຍ້ອນຄິດວ່ານາງນອກໃຈ."*[4] |
| ການສອດແນມທາງໄຊເບີ້ (Cyberobsessional pursuit) | *ການຈໍາກັດ, ຕິດຕາມກວດສອບ ຫຼືການຄວບຄຸມ ການໃຊ້ເຕັກໂນໂລຊີ* | **ການຈໍາກັດ, ຕິດຕາມ ຫຼື ຄວບຄຸມ ການໃຊ້ເຕັກໂນໂລຊີ** ແມ່ນຮູບແບບໜຶ່ງຂອງການຄວບຄຸມ ແລະ ການລ່ວງລະເມີດ; ພຶດຕິກໍານີ້ ເປັນການສື່ໃຫ້ເຫັນເຖິງການບີບບັງຄັບໃຫ້ມີຄວາມສໍາພັນແບບຊູ້ສາວ.<br><br>ໃນ ສປປ ລາວ ໂດຍທົ່ວໄປຄູ່ຮັກຈະບອກລະຫັດຜ່ານການເຂົ້າເຖິງຊ່ອງທາງອອນລາຍຕ່າງໆໃຫ້ກັນ ແລະ ກັນຮັບຮູ້, ຈຸດປະສົງເພື່ອການກວດສອບ ແລະ ຕິດຕາມ ເຊິ່ງເປັນເລື່ອງປົກກະຕິຂອງໄວໜຸ່ມ. | **ຜູ້ກະທໍາຜິດ ພະຍາຍາມຊັກຊວນ ເປົ້າໝາຍເພດກົງກັນຂ້າມ ໄວໜຸ່ມເພດຍິງ ທີ່ມີຄວາມສໍາພັນທີ່ໃກ້ຊິດແມ່ນມີຄວາມສ່ຽງ.** | *"ແຟນຂອງໝູ່ຂ້ອຍ ຂໍລະຫັດຜ່ານສື່ສັງຄົມອອນລາຍຂອງນາງ, ຖ້ານາງປະຕິເສດ, ແຟນຂອງນາງຈະໃຈຮ້າຍ ແລະບໍ່ຍອມຄົບກັບນາງຕໍ່"* |

| | ປະເພດ | ພຶດຕິກໍາ | ຜູ້ກະທໍາຜິດ / ການກໍາເນີດ ເປົ້າໝາຍ | ປະສົບການ/ເຫດການ |
|---|---|---|---|---|
| ການລ່ວງລະເມີດທາງເພດ | *ການຈັດຫາ ເພື່ອບັງຄັບຂາຍບໍລິການທາງເພດ ແລະ ການຄ້າມະນຸດ* | ສື່ສັງຄົມອອນລາຍ ແມ່ນໄດ້ຖືກນໍາໃຊ້ເພື່ອ ຈັດຫາການຂາຍບໍລິການທາງເພດ, ການບັງຄັບຂາຍບໍລິການທາງເພດ, ການຄ້າມະນຸດ ແລະ ຫາຜົນປະໂຫຍດຈາກການບໍລິການທາງເພດອື່ນໆ.<br>ມີຫຼາຍກໍລະນີ ທີ່ກ່ຽວຂ້ອງ ກັບການຈັດຫາ ຫຼືການຄ້າມະນຸດ ແມ່ນມັກເກີດຂຶ້ນຢູ່ສະຖານບັນເທີງ ເຂດຊາຍແດນຂອງລາວ, ໄທ ແລະ ມຽນມ້າ]. | **ກຸ່ມເປົ້າໝາຍຂອງຜູ້ຈັດຫາ ແມ່ນ ໄວໜຸ່ມເພດຍິງທີ່ມີອາຍຸ 20 ປີຕົ້ນໆ ທີ່ກໍາລັງຊອກຫາໂອກາດໃນການຈ້າງງານ ແລະ ເປັນແຮງງານເຄື່ອນຍ້າຍ.** | *""ສິ່ງບໍ່ດີອີກອັນໜຶ່ງຂອງສື່ສັງຄົມອອນລາຍ ກໍຄືວ່າ ພວກເຂົາ [ຜູ້ຈັດຫາຄົນຕ່າງປະເທດ] ພະຍາຍາມຕົວະຍົວະແມ່ຍິງວ່າ ມີວຽກເຮັດງານທໍາດີ, ເງິນເດືອນຫຼາຍ, ແຕ່ຄວາມຈິງແລ້ວ ມັນເປັນພຽງການຄ້າມະນຸດເທົ່ານັ້ນ. ມີກໍລະນີທີ່ຂ້ອຍຮູ້ ຢູ່ບ່ອນໃດທີ່ແມ່ຍິງຄົນໜຶ່ງໄດ້ຖືກຂົ່ມຂືນໂດຍຜູ້ຊາຍ 5 ຄົນ ແລະພວກເຂົາບໍ່ສາມາດໜີຈາກວົງຈອນນັ້ນໄດ້."* |

4 ການສໍາຫຼວດແຫ່ງຊາດກ່ຽວກັບສຸຂະພາບ ແລະປະສົບການຊີວິດຂອງແມ່ຍິງ 2014 - ການສຶກສາກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ.

| ປະເພດ | ພຶດຕິກຳ | ຜູ້ກະທຳຜິດ / ການກຳນົດເປົ້າໝາຍ | ປະສົບການ/ເຫດການ |
|---|---|---|---|
| *ການບັງຄັບໃຫ້ແຕ່ງງານ* | ຍັງມີບາງກຸ່ມຊົນເຜົ່າ ທີ່ຍັງຄົງມີການ ແຕ່ງງານກ່ອນໄວ ໂດຍຜ່ານການນຳໃຊ້ ເຕັກໂນໂລຊີ, ລວມທັງການບັງຄັບແຕ່ງງານກັບເດັກທີ່ຍັງບໍ່ທັນບັນລຸນິຕິພາວະ. | **ກຸ່ມເປົ້າໝາຍທີ່ຈະຕົກເປັນເຫຍື່ອຂອງໄວໜຸ່ມຊາຍ ແມ່ນໄວໜຸ່ມເພດຍິງທີ່ເປັນຊົນເຜົ່າ ແລະ ອາໄສຢູ່ເຂດຊົນນະບົດ** | ***ກໍລະນີສຶກສາ: ການ ບັງຄັບແຕ່ງງານ***<br><br>*ນາງກົບ*, ເດັກຍິງຊາວເຜົ່າມົ້ງອາຍຸ 13 ປີ, ໄດ້ຖືກໄວໜຸ່ມຊາຍຢູ່ໃນຊຸມຊົນຖ່າຍຮູບໂດຍ ແລະ ໂພສຮູບຂອງກົບລົງໃນສື່ສັງຄົມອອນລາຍ ແລະຂຽນຄຳບັນຍາຍວ່າ: "ເດັກຍິງຄົນນີ້ເປັນຂອງຂ້ອຍ, ນາງໄດ້ຖືກຂາຍໃຫ້ຂ້ອຍແລ້ວ." ເມື່ອນາງກົບປະຕິເສດການແຕ່ງດອງກັບລາວ, ເດັກຊາຍໄດ້ລ່ວງລະເມີດຮ່າງກາຍຂອງນາງ ແລະຖ່າຍວິດີໂອໄວ້. ນາງກົບ ຖືກພໍ່ແມ່ຂອງລາວ ແລະ ເດັກຊາຍ ບັງຄັບໃຫ້ແຕ່ງດອງກັບເດັກຊາຍຄົນນັ້ນ.*<br><br>**ນາງກົບ ແມ່ນນາມສົມມຸດ ຂອງຜູ້ປະສົບເຄາະຮ້າຍ* |
| *ການລ່ວງລະເມີດໂດຍໃຊ້ຮູບພາບ* ***(IBA)*** | ຮູບພາບ ຫຼືວິດີໂອ ທີ່ຖືກນຳໃຊ້ທາງອອນລາຍເພື່ອບີບບັງຄັບ, ຂົ່ມຂູ່, ຄຸກຄາມ, ຄັດຄ້ານ ຫຼື ລ່ວງລະເມີດ ໂດຍສະເພາະການລ່ວງລະເມີດທາງເພດທີ່ກ່ຽວຂ້ອງກັບພຶດຕິກຳຢ່າງຫນ້ອຍ 1ໃນ 3 ຢ່າງ:<br>1) ການຂໍຮູບພາບ-ວິດີໂອ,<br>2) ການຖ່າຍຮູບ-ວິດີໂອ<br>3) ການເຜີຍແຜ່ຮູບພາບ-ວິດີໂອ<br>ໂດຍສະເພາະ ຮູບພາບລັບ/ທາງເພດໂດຍບໍ່ໄດ້ຮັບການຍິນຍອມ ເຫັນດີ. | **ກຸ່ມເປົ້າໝາຍ ແມ່ນໄວໜຸ່ມທຸກກຸ່ມເພດ ລວມທັງກຸ່ມທີ່ມີລົດສະນິຍົມທາງເພດທີ່ຫຼາກຫຼາຍ, ເຖິງຢ່າງໃດກໍ່ຕາມ ໄວໜຸ່ມເພດຍິງ ແລະ ກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ (LGBT) ໄດ້ຮັບຜົນກະທົບຫຼາຍກວ່າໝູ່..**<br><br>**ການລ່ວງລະເມີດໂດຍການໃຊ້ຮູບພາບ ຖືກກະທຳໂດຍຄົນແປກຫນ້າທີ່ເປັນເພດຊາຍ, ຄົນທີ່ຮູ້ຈັກກັນ, ແຟນ ຫຼື ຄູ່ຮັກ.** | *ການຂໍຮູບພາບ: "[ຫົວໜ້າຂອງຂ້ອຍທີ່ເປັນເພດຊາຍ] ຕິດຕາມ ແລະ ສະແດງຄວາມຄິດເຫັນຕໍ່ກັບໂພສຂອງຂ້ອຍໃນເຟສບຸກ, ລາວສົ່ງຂໍ້ຄວາມ / ໂທຫາຂ້ອຍໃນ ເມສເຊນເຈີ (Messenger), ແລະຊວນຂ້ອຍໄປຫຼິ້ນ ຫຼາຍຄັ້ງ ... ເມື່ອຂ້ອຍປະຕິເສດ, ລາວກໍ່ໃຈຮ້າຍ. ບາງຄັ້ງ ລາວຂໍໃຫ້ຂ້ອຍສົ່ງຮູບອະໄວຍະວະເພດຂອງຂ້ອຍໃຫ້ລາວ, ມັນຄ້າຍຄືກັບການໃຊ້ອຳນາດລ່ວງລະເມີດ."*<br><br>*ການຖ່າຍຮູບ: "ສຳລັບແມ່ຍິງ ແລະ ເດັກຍິງ, ຄລິບວິດີໂອຖືກຖ່າຍໃນຂະນະທີ່ມີເພດສຳພັນ ຫຼື ເປືອຍກາຍ – ບາງຄັ້ງກໍໄດ້ຮັບການຍິນຍອມ ແລະ ບາງຄັ້ງກໍບໍ່ໄດ້ຮັບການຍິນຍອມ ແລະ ຖືກໃຊ້ຮູບພາບເຫຼົ່ານັ້ນເພື່ອຂົ່ມຂູ່ (Blackmail). ຜູ້ຖືກເຄາະຮ້າຍ ໄດ້ຂໍຄວາມຊ່ວຍເຫຼືອຈາກພວກເຮົາເພື່ອຢຸດການເຜີຍແຜ່ຄລິບເຫຼົ່ານັ້ນ [ທີ່ສະຫະພັນແມ່ຍິງລາວ]."*<br><br>*ການເຜີຍແຜ່: "ຂ້ອຍແມ່ນຜູ້ໜຶ່ງທີ່ຈັດຢູ່ໃນກຸ່ມຄົນທີ່ຜູ້ໜຶ່ງມີຄວາມຫຼາກຫຼາຍທາງເພດ (LGTBQIA+). ຄັ້ງໜຶ່ງຂ້ອຍໄດ້ຮັບການໂທຜ່ານວິດີໂອຈາກຄົນແປກໜ້າ ແລະ ໄດ້ຮັບສາຍດ້ວຍຄວາມຢາກຮູ້ຢາກເຫັນ, ແຕ່ສິ່ງທີ່ຂ້ອຍເຫັນແມ່ນຊາຍເຖົ້າຜິວຂາວກຳລັງເປືອຍກາຍ ແລະ ອະໄວຍະວະເພດຂອງລາວ".* |

| | ປະເພດ | ພຶດຕິກຳ | ຜູ້ກະທຳຜິດ / ການກຳນົດເປົ້າໝາຍ | ປະສົບການ/ເຫດການ |
|---|---|---|---|---|
| **ການລ່ວງລະເມີດທາງເພດ** | *ການໝິ່ນປະໝາດທາງເພດ* | ການເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງສູ່ສາທາລະນະ ເຊິ່ງເຮັດໃຫ້ເກີດຄວາມເສຍຫາຍຕໍ່ຊື່ສຽງຂອງບຸກຄົນ, ໂດຍສະເພາະມັກຈະເກີດຂຶ້ນກັບແມ່ຍິງແລະເລື່ອງທາງເພດຂອງແມ່ຍິງ. | **ກຸ່ມເປົ້າໝາຍ ແມ່ນອາດີດຄົນຮັກທີ່ເປັນເພດຍິງ** | *... ລາວໂພສຮູບ ທີ່ບອກເລື່ອງທີ່ບໍ່ດີກ່ຽວກັບຂ້ອຍ ແລະຂ້ອຍຮູ້ສຶກວ່າມັນເປັນ ຄວາມຮຸນແຮງທາງອອນລາຍ ເພາະວ່າລາວຄິດວ່າຂ້ອຍເປັນແມ່ຍິງ ແລະລາວສາມາດເຮັດແບບນີ້ກັບຂ້ອຍໄດ້ ... ມັນມີຜົນກະທົບຕໍ່ຊີວິດຈິງຂອງຂ້ອຍ ຍ້ອນວ່າຄົນທີ່ຂ້ອຍຮູ້ຈັກເຊື່ອໃນສິ່ງທີ່ແຟນເກົ່າຂອງຂ້ອຍໂພສ ແລະພວກເຂົາເລີ່ມເວົ້າສິ່ງບໍ່ດີກ່ຽວກັບ ຂ້ອຍ".* |
| | *ການເຢາະເຢີ້ຍທາງອອນລາຍ ແລະການໃຊ້ຄຳເວົ້າທີ່ກຽດຊັງ* | ການໃຊ້ເຕັກໂນໂລຊີ ແລະສື່ສັງຄົມອອນລາຍເພື່ອໂຈມຕີ ຫຼືໃຊ້ພາສາຫຍາບຄາຍ ຫຼື ຈຳແນກ, ທຳລາຍຄວາມນັບຖືຕົນເອງ ຫຼືຊື່ສຽງຂອງຜູ້ໃດຜູ້ໜຶ່ງ, ຈະມີເປົ້າໝາຍ ຫຼື ກະຕຸ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະກຸ່ມຄົນທີ່ມີຄວາມຫຼາກຫຼາຍ.<br><br>ສຳລັບແມ່ຍິງ, ແມ່ຍິງພິການ ແລະກຸ່ມຄົນຊົນເຜົ່າ ການສະແດງຄວາມຄິດເຫັນກ່ຽວກັບຮູບຮ່າງໜ້າຕາແມ່ນເປັນເລື່ອງປົກກະຕິ ແລະມັກຈະຖືກກະຕຸ້ນໂດຍອັກຄະຕິທາງເພດ.<br><br>ສຳລັບກຸ່ມຄົນທີ່ຫຼາກຫຼາຍທາງເພດ (**LGBT**) ຄວາມຄິດເຫັນທີ່ຮຸກຮານກ່ຽວກັບລົດນິຍົມທາງເພດ ຫຼື ການສະແດງອອກທາງເພດຂອງເຂົາເຈົ້າ ແມ່ນເປັນເລື່ອງທີ່ເຫັນໄດ້ທົ່ວໄປ. | **ຜູ້ກະທຳຜິດ (ຄົນແປກໜ້າ ແລະຄົນຮູ້ຈັກ) ມີເປົ້າໝາຍແນໃສ່:**<br>- ແມ່ຍິງ<br>- ແມ່ຍິງທີ່ເຮັດອາຊີບສາທາລະນະ<br>- ແມ່ຍິງພິການ<br>- ແມ່ຍິງຊົນເຜົ່າ<br>- ກຸ່ມຄົນທີ່ມີຄວາມຫຼາຍທາງເພດ (**LGBT**) | *ແມ່ຍິງ: "ຜູ້ຄົນສະແດງຄວາມຄິດເຫັນທີ່ບໍ່ດີໃນສື່ສັງຄົມອອນລາຍ (ເຊັ່ນ: ເຈົ້າດຳ, ເຈົ້າຕຸ້ຍເກີນໄປ) ນີ້ອາດຈະເຮັດໃຫ້ຄົນອື່ນຮູ້ສຶກບໍ່ດີ ຫຼືຮູ້ສຶກບໍ່ປອດໄພໃນຕົວເອງ ແລະຢ້ານທີ່ຈະໂພສຫຍັງລົງໃນສື່ສັງຄົມອອນລາຍ ໄລຍະໜຶ່ງ" .*<br><br>*ແມ່ຍິງພິການ: "ໃນຮູບກຸ່ມຈາກກອງປະຊຸມທີ່ຂ້ອຍໄດ້ໄປຮ່ວມ, ພວກເຂົາສະແດງຄວາມຄິດເຫັນເຊັ່ນ: ຂາເຈົ້າເປັນແບບນັ້ນ, ເຈົ້າຍັງຢາກໃຫ້ຄົນເບິ່ງມັນບໍ?"*<br><br>*ແມ່ຍິງຊົນເຜົ່າ: "ເຂົາເຈົ້າເວົ້າວ່າລາວເທິງ (ຊົນເຜົ່າເຂດພູດອຍ) ບໍ່ມີການສຶກສາ, ທຸກຍາກ, ມັນເກີດຂຶ້ນກັບຂ້ອຍໃນ TikTok, ເຂົາເຈົ້າຂຽນຄຳເຫັນໃສ່ຮູບຂອງຂ້ອຍວ່າ "ເຈົ້າເປັນລາວເທິງ ເຈົ້າມີເຂົ້າກິນບໍ?" ຄຳເຫັນເຫຼົ່ານີ້ແມ່ນມາຈາກຄົນແປກຫນ້າ."*<br><br>ຄົນຫຼາກຫຼາຍທາງເພດ: *"ເມື່ອຂ້ອຍໂພສຮູບຂ້ອຍກັບແຟນທາງອອນລາຍ, ສ່ວນຫຼາຍຂ້ອຍກໍ່ໄດ້ຮັບຄຳຄິດເຫັນທີ່ດູຖູກຄາມເຊັ່ນ 'ໃຜແມ່ນຜົວເຈົ້າ?'... ຄຳຄຶດເຫັນແບບນີ້ເຮັດໃຫ້ຂ້ອຍທໍ້ແທ້ ແລະຕອນນີ້ຂ້ອຍຢ້ານເກີນໄປທີ່ຈະໂພສຮູບຂອງຂ້ອຍ ທາງອອນລາຍ."* |

| | ປະເພດ | ພຶດຕິກຳ | ຜູ້ກະທຳຜິດ / ການກຳເນີດ ເປົ້າໝາຍ | ປະສົບການ/ເຫດການ |
|---|---|---|---|---|
| **ການລ່ວງລະເມີດທາງເພດ** | *ການແຮັກ, ການໃຊ້ບັນຊີປອມ ແລະ ການປອມເປັນບຸກຄົນອື່ນ* | ທຸກຄົນສາມາດຖືກແຮັກຂໍ້ມູນໄດ້, ເຊິ່ງເຫດການນີ້ ເປັນຮູບແບບໜຶ່ງຂອງຄວາມຮຸນແຮງທາງອອນລາຍ; ໂດຍເປົ້າໝາຍຫຼັກທີ່ມີຄວາມສ່ຽງ ແມ່ນ ແມ່ຍິງ ແລະ ແມ່ຍິງສູງອາຍຸເພື່ອຕົວະຍົວະເອົາເງິນ ຫຼື ຊັບສິນ.<br><br>ການສ້າງບັນຊີປອມ ແລະ ການປອມຕົວເປັນບຸກຄົນໃດໜຶ່ງ ມັກຈະໃຊ້ເພື່ອ ຫາຄູ່ຮັກທາງອອນລາຍ ໂດຍຜ່ານການສ້າງສະຖານະການໃດໜຶ່ງ, ເຊິ່ງອາດເຮັດໃຫ້ຜູ້ເຄາະຮ້າຍ ຕົກຢູ່ໃນສະຖານະການອັນຕະລາຍ ຫຼື ເຜີຍແຜ່ຂໍ້ມູນກ່ຽວກັບເພດໂດຍບໍ່ໄດ້ຮັບການຍິນຍອມ. ຂຶ້ນພ້ອມໆກັນ. | ກຸ່ມແຮັກຂໍ້ມູນ ມັກຈະແນເປົ້າໝາຍໃສ່ທຸກຄົນ, ແຕ່ກຸ່ມຜູ້ທີ່ມີຄວາມສ່ຽງສູງ ແມ່ນແມ່ຍິງທີ່ສູງອາຍຸ.<br><br>**ກຸ່ມເປົ້າໝາຍທີ່ອາດຕົກເປັນເຫຍື່ອ ແມ່ນ** ໄວໜຸ່ມເພດຍິງ ແລະ ກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ (LGBT) | *"ປ້າຂອງຂ້ອຍຖືກແຮັກມາກ່ອນ ແລະຄົນນັ້ນໄດ້ໃຊ້ບັນຊີຂອງປ້າ ເພື່ອສົ່ງຂໍ້ຄວາມຫາໝູ່ເພື່ອນ/ສະມາຊິກໃນຄອບຄົວຂອງປ້າ ເພື່ອຢືມເງິນ. ອັນນີ້ອາດຈະເປັນຍ້ອນປ້າຂອງຂ້ອຍເຖົ້າແລ້ວ ແລະບໍ່ຮູ້ລະມັດລະວັງເລື່ອງຄວາມປອດໄພ."*<br><br>*"ຜູ້ອາວຸໂສຄົນໜຶ່ງ ໄດ້ສົ່ງຂໍ້ຄວາມຫາຂ້ອຍແບບຄົນຮັກ ຈາກນັ້ນຕໍ່ມາຂ້ອຍກໍ່ພົບວ່າມັນເປັນບັນຊີປອມຂອງບາງຄົນທີ່ສ້າງຂຶ້ນ, ເມື່ອຮູ້ຄວາມຈິງແລ້ວຂ້ອຍຢ້ານຫຼາຍ ຂ້ອຍຈຶ່ງຕັ້ງຄຳຖາມຕົວເອງວ່າ: "ຫາກຂ້ອຍຕັດສິນໃຈໄປພົບລາວ ຈະເກີດຫຍັງຂຶ້ນ?"* |

## ຄວາມຮຸນແຮງຕໍ່ເນື່ອງ: ຈາກແບບອອນລາຍ ໄປສູ່ແບບເຊິ່ງໜ້າ ແລະ ແບບເຊິ່ງໜ້າໄປສູ່ແບບອອນລາຍ

ການຄົ້ນພົບເບື້ອງຕົ້ນພົບວ່າ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ມັກຈະເກີດຂຶ້ນຢ່າງຕໍ່ເນື່ອງ ເຊິ່ງການກະທຳທີ່ເລີ່ມຕົ້ນໃນຊ່ອງທາງອອນລາຍ ອາດຈະນຳໄປສູ່ການລ່ວງລະເມີດທາງເພດ ແບບເຊິ່ງໜ້າ (ອອບໄລນ໌) ແລະ ແບບເຊິ່ງໜ້າໄປສູ່ແບບອອນລາຍ

ຜູ້ໃຫ້ຂໍ້ມູນໄດ້ເລົ່າຄືນສະຖານະການຂອງຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊ ເຊິ່ງເປັນຊ່ອງທາງໜຶ່ງທີ່ກໍໃຫ້ເກີດຄວາມຮຸນແຮງ ເຊັ່ນ: ການບີບບັງຄັບໃຫ້ມີຄວາມສຳພັນແບບຊູ້ສາວ, ການຕິດຕາມ ແລະ ຄວບຄຸມຄູ່ຮັກຂອງຕົນຜ່ານສື່ອອນລາຍ [5], ຈົນກາຍເປັນຄວາມຮຸນແຮງທາງຮ່າງກາຍ ຫຼື ການຄາດຕະກຳແມ່ຍິງ (Femicide)[6].

ໃນຂະນະທີ່ຜູ້ໃຫ້ຂໍ້ມູນອີກສ່ວນໜຶ່ງໄດ້ອະທິບາຍເຖິງການລ່ວງລະເມີດທາງອອນລາຍ ຫຼື ການລ່ວງລະເມີດໂດຍໃຊ້ຮູບພາບ (IBA) ທີ່ຮຸນແຮງຂຶ້ນຈົນກ້າວໄປສູ່ຄວາມຮຸນແຮງທາງດ້ານຮ່າງກາຍ [7] ຫຼື ການຂົ່ມຂືນ[8] (ທາງອອນລາຍ ຫາ ອອຟລາຍ). ພຶດຕິກຳທີ່ເປັນອັນຕະລາຍລວມມີ ການແຕ່ງງານກ່ອນໄວອັນຄວນ ແລະການຄ້າມະນຸດ ເປັນປະກົດການຫຍໍ້ທໍ້ໃນສັງຄົມລາວ ແລະ ພາກພື້ນໃນປັດຈຸບັນ.[9]

5 ກຸ່ມສົນທະນາ 7.
6 ກຸ່ມສົນທະນາ 8
7 ຜູ້ໃຫ້ຂໍ້ມູນຫຼັກ ສຍລ
8 ກຸ່ມສົນທະນາ 5.
9 ກຸ່ມສົນທະນາ 1, 3, 4, 5; ຜູ້ໃຫ້ຂໍ້ມູນຫຼັກ ສຍລ.

## ສັງຄົມມີການຕອບໂຕ້ຕໍ່ກັບເຫດການ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີໃນ ສປປ ລາວ ແນວໃດ?

- ການຕອບໂຕ້ສ່ວນບຸກຄົນ ເຊັ່ນ: ການລຶບຄໍາເຫັນ, ບລັອກບັນຊີ ແລະການລາຍງານໃຫ້ສື່ສັງຄົມອອນລາຍດັ່ງກ່າວ
- ເປັນ "ເຈົ້າການ" ແລະ ສຶກສາອົບຮົມໝູ່ເພື່ອນ, ໃຫ້ພວກເຂົາເຫັນການກະທໍາຜິດດັ່ງກ່າວ
- ການປົກປິດຕົນເອງ (ຖອນຕົວອອກຈາກສື່ສັງຄົມອອນລາຍ)
- ເຕືອນໝູ່ເພື່ອນເມື່ອພວກເຂົາສັງເກດເຫັນສັນຍານເຕືອນໄພ, ໂດຍສະເພາະແມ່ນຄູ່ຮັກຂອງຕົນ
- ຂໍຄວາມຊ່ວຍເຫຼືອຈາກຄອບຄົວ ແລະ ໝູ່ເພື່ອນ
- ບໍ່ມີການຕອບໂຕ້ໃດໆ ເນື່ອງຈາກຂາດຄວາມຮູ້ ແລະ ເຂົ້າໃຈກ່ຽວກັບ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີ



## ການບໍລິການທີ່ມີຢູ່ ແລະ ການໃຊ້ບໍລິການເຫຼົ່ານີ້ຢູ່ໃນ ສປປ ລາວ

ຊ່ອງທາງການຊ່ວຍເຫຼືອ: ຜູ້ໃຫ້ບໍລິການແກ່ຜູ້ຖືກໃຊ້ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີທີ່ມີຢູ່ໃນ ສປປ ລາວ

**ກະຊວງເຕັກໂນໂລຊີ ແລະ ການສື່ສານ (ກຕສ):** ຮັບການແຈ້ງກ່ຽວກັບບັນຫາ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີ (TFGBV) ຈາກບຸກຄົນ ຫຼື ນິຕິບຸກຄົນ ຫຼືໂດຍຜ່ານການສົ່ງຕໍ່ຈາກຕໍາຫຼວດ. ກົມຮັກສາຄວາມປອດໄພທາງໄຊເບີ້ ສາມາດຄົ້ນຫາລາຍລະອຽດຂອງຜູ້ກະທໍາຜິດ, ຕິດຕາມ ກວດກາ ແລະ ເກັບກໍາຫຼັກຖານທີ່ກ່ຽວຂ້ອງໃນລະບົບອິນເຕີເນັດ ແລະ ແບ່ງປັນຂໍ້ມູນດັ່ງກ່າວກັບຕໍາຫຼວດ ເພື່ອນໍາໃຊ້ເຂົ້າໃນການສືບສວນ-ສອບສວນ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີ ແລະ ຍັງມີສິດ ໃນການນໍາເອົາເນື້ອໃນດັ່ງກ່າວອອກຈາກລະບົບອິນເຕີເນັດ.

**ສະຫະພັນແມ່ຍິງລາວ (ສຍລ):** ໃຫ້ຄໍາແນະນໍາ, ຂໍ້ມູນ ແລະໃຫ້ຄໍາປຶກສາກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນໍາໃຊ້ເຕັກໂນໂລຊີ ຜ່ານສາຍດ່ວນແຫ່ງຊາດ (24/7) ໝາຍເລກ 1362, ພ້ອມທັງໃຫ້ຄໍາປຶກສາ, ຄໍາແນະນໍາດ້ານກົດໝາຍ, ການຄຸ້ມຄອງກໍລະນີ ແລະບ່ອນພັກອາໄສທີ່ປອດໄພຢ່າງຕໍ່ເນື່ອງ.

**ປ້ອງກັນຄວາມສະຫງົບ:** ກໍລະນີມີຂໍ້ສົງໄສຖ້າມີການຂົ່ມຂູ່ ຫຼືກັງວົນກ່ຽວກັບຄວາມປອດໄພທາງຮ່າງກາຍ ຫຼື ຄວາມເສຍຫາຍ ຫຼືການຈັດຫາຄົນ ເພື່ອການຄ້າມະນຸດ ຫຼືການບັງຄັບໃຫ້ເຮັດວຽກຂາຍບໍລິການທາງເພດ ແມ່ນສາມາດໃຊ້ບໍລິການສາຍດ່ວນ ໝາຍເລກ 1300.

**ການຊ່ວຍເຫຼືອດ້ານສຸຂະພາບຈິດ ແລະຈິດສັງຄົມແຫ່ງຊາດອື່ນໆ (MHPSS)/ສາຍດ່ວນທີ່ປຶກສາ:**

- ສຳລັບຍິງໜຸ່ມ ແລະ ເດັກຍິງ ທີ່ມີບັນຫາເລື່ອງຄວາມຕຶງຄຽດ, ຄວາມວິຕົກກັງວົນ ກ່ຽວກັບ ຊີວິດ, ຄວາມຮັກ ແລະ ຄວາມສຳພັນ ໂທສາຍດ່ວນໝາຍເລກ 1554.
- ສຳລັບຂໍ້ມູນ ແລະຄຳແນະນຳສຳລັບໄວໜຸ່ມ ກ່ຽວກັບສຸຂະພາບທາງເພດ ແລະສຸຂະພາບຈະເລີນພັນ ລວມທັງການຄຸມກຳເນີດ, ແມ່ຍິງສາມາດໂທຫາສາຍດ່ວນໝາຍເລກ 1361 ແລະຜູ້ຊາຍສາມາດໂທຫາສາຍດ່ວນໝາຍເລກ 137.
- ໄວໜຸ່ມສາມາດດາວໂຫຼດແອັບ ນ້ອຍຢາກຮູ້ (NoiYakhoo) ສຳລັບຂໍ້ມູນກ່ຽວກັບສຸຂະພາບຈະເລີນພັນ, ສຸຂະພາບທາງເພດ, ພະຍາດຕິດຕໍ່ທາງເພດສຳພັນ ແລະ ອື່ນໆ.

ຜົນການຄົ້ນພົບເບື້ອງຕົ້ນຍັງສະແດງໃຫ້ເຫັນວ່າ ຜູ້ເຂົ້າຮ່ວມຈຳນວນຫຼາຍໄດ້ລາຍງານວ່າເມື່ອພວກເຂົາປະສົບກັບຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ພວກເຂົາບໍ່ໄດ້ຂໍຄວາມຊ່ວຍ ເຫຼືອຈາກເຈົ້າໜ້າທີ່ຈາກອົງກອນໃດໆ ເນື່ອງຈາກວ່າ:

- ຄວາມຮູ້ ຫຼືຄວາມຮັບຮູ້ກ່ຽວກັບທາງເລືອກ ໃນການຊອກຫາຄວາມຊ່ວຍເຫຼືອຍັງຈຳກັດ.
- ຜູ້ທີ່ຖືກສຳພາດຄິດວ່າບໍ່ມີກົດໝາຍ ຫຼືນະໂຍບາຍພຽງພໍກ່ຽວກັບ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ
- ກຸ່ມທີ່ມີຄວາມຫຼາກຫຼາຍ ຕົວຢ່າງ: ແມ່ຍິງພິການ, LGBT, ຄົນຊົນເຜົ່າ ມີຄວາມທ້າທາຍໃນການເຂົ້າເຖິງການບໍລິການ
- ເຈົ້າໜ້າທີ່ໃຫ້ການບໍລິການຂາດຄວາມເຂົ້າໃຈ ວ່າ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ເປັນຮູບແບບຂອງຄວາມຮຸນແຮງທີ່ຄວນດຳເນີນການແກ້ໄຂຢ່າງຈິງຈັງ.
- ຍັງຈຳກັດໃນການສຶກສາຄວາມຮູ້ທາງດ້ານດິຈິຕອລ.

**ຂອບກົດໝາຍ ທີ່ປົກປ້ອງປະຊາຊົນໃນ ສປປ ລາວ ຈາກ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ**

ໃນຂະນະທີ່ບໍ່ມີກົດໝາຍສະເພາະກ່ຽວກັບ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີໃນ ສປປ ລາວ ແຕ່ກໍ່ຍັງມີບາງໂຄງປະກອບຂອງຂອບກົດໝາຍທີ່ສາມາດນຳໃຊ້ໄດ້ຕໍ່ກັບການໂຕ້ຕອບຄວາມຮຸນແຮງຮູບແບບດັ່ງກ່າວເຊັ່ນ:

- ກົດໝາຍອາຍາ ປີ *2017*
- ກົດໝາຍວ່າດ້ວຍ ການຕ້ານ ແລະສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກ (*2014*)
- ກົດໝາຍວ່າດ້ວຍ ການຕ້ານ ແລະສະກັດກັ້ນອາດຊະຍາກຳທາງອິນເຕີເນັດ ປີ *2015*
- ດຳລັດເລກທີ *327*(*2014*) ວ່າດ້ວຍການຄວບຄຸມ/ການຄຸ້ມຄອງຂໍ້ມູນຜ່ານອິນເຕີເນັດ
- ກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ (*2015*)

**ແນວທາງການປ້ອງກັນໃນຕໍ່ໜ້າ:**

**ຈະມີວິທີການສ້າງລະບົບການປ້ອງກັນແນວໃດ ເພື່ອປ້ອງກັນ ແລະ ຕອບໂຕ້ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ໃນຕໍ່ໜ້າ:**

ຄຳແນະນຳເບື້ອງຕົ້ນແມ່ນອີງໃສ່ຂໍ້ມູນຈາກ ບັນດາກຸ່ມສົນທະນາ ແລະ ຜູ້ໃຫ້ຂໍ້ມູນຫຼັກ ແລະການແນະນຳໃນທົ່ວໂລກ ສັງລວມດັ່ງນີ້:

**ຄຳແນະນຳທີ 1**: ສ້າງຄວາມເຂັ້ມແຂງທາງດ້ານກົດໝາຍ, ລະບຽບການ ແລະ ຂອບນະໂຍບາຍເພື່ອປົກປ້ອງພົນລະເມືອງລາວຈາກຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີໃຫ້ຫຼາຍຂຶ້ນ.

**ຄຳແນະນຳທີ 2**: ເສີມສ້າງກົນໄກການແກ້ໄຂໃຫ້ມີຄຸນນະພາບ ແລະ ການປະສານງານເພື່ອແກ້ໄຂ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ, ລວມທັງບັນດາ ບໍລິສັດທາງດ້ານເຕັກໂນໂລຊີ, ຜູ້ໃຫ້ບໍລິການປ້ອມດ່ານໜ້າ ແລະກົນໄກຄວາມຮັບຜິດຊອບຕ່າງໆ.

**ຄຳແນະນຳທີ 3**: ລົງທຶນໃສ່ການປ້ອງກັນ ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ພ້ອມທັງສົ່ງເສີມ ແລະ ການໂຄສະນາ ໃຫ້ເຫັນຄວາມສຳຄັນຂອງການຕ້ານຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ ເຂົ້າໃນຫຼັກສູດມັດທະຍົມ ແລະ ການສຶກສາຊັ້ນສູງ

**ຄຳແນະນຳທີ 4**: ເພີ່ມທະວີສະໜອງຂໍ້ມູນດ້ານປະລິມານ ແລະ ຄຸນນະພາບ ພ້ອມດຳເນີນການສຳຫຼວດ ແລະ ການຄົ້ນຄວ້າກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີທີ່ໄດ້ມາດຕະຖານໂດຍອີງໃສ່ຂໍ້ມູນຈາກການຄົ້ນຄວ້າ, ດ້ານປະຊາກອນ ແລະ ຂໍ້ມູນດ້ານການບໍລິຫານ/ຂໍ້ມູນການບໍລິການ.

## ນິຍາມຄຳສັບສະເພາະ

*ຄວາມຮຸນແຮງບົນພື້ນຖານທາງເພດດ້ວຍການນຳໃຊ້ເຕັກໂນໂລຊີ (TF GBV) ໝາຍເຖິງ ການກໍ່ຄວາມຮຸນແຮງທີ່ກະທຳໂດຍບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ , ລວມທັງການຊໍ້າເຕີມ ແລະ ນຳຂໍ້ມູນໄປເຜີຍແຜ່ ໂດຍການນຳໃຊ້ເຕັກໂນໂລຊີ ຂໍ້ມູນຂ່າວສານ ແລະ ການສື່ສານ ຫຼື ສື່ດີຈີຕອລຕໍ່ກັບບຸກຄົນບົນພື້ນຖານທາງເພດຂອງເຂົາເຈົ້າ.*

ຄວາມຮຸນແຮງບົນພື້ນຖານທາງເພດ/ຄວາມຮຸນແຮງຕໍ່ແມ່ຍິງ (GBV) ໝາຍເຖິງ ການກະທຳທີ່ຄຸກຄາມ ແລະ ເປັນອັນຕະລາຍ ຕໍ່ບຸກຄົນໃດໜຶ່ງ ແລະ ມີພື້ນຖານມາຈາກຄວາມບໍ່ເທົ່າທຽມກັນລະຫວ່າງ ເພດຍິງ ແລະ ເພດຊາຍ

ຄວາມຫຼາກຫຼາຍທາງເພດ (LGBT) ໝາຍເຖິງກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ ເຊັ່ນ ຍິງຮັກຍິງ (Lesbian) ຊາຍຮັກຊາຍ (Gay) ກະເທີຍ (Bisexual) ແລະ ແປງເພດ (Transgender)

ຊ່ອງທາງອອນລາຍ ໝາຍເຖິງ ການບໍລິການທາງ ດິຈິຕອລ (ອອນລາຍ) ທີ່ອຳນວຍຄວາມສະດວກໃນການຕອບໂຕ້ກັນ ຫຼື ມີປະຕິສຳພັນກັນ ລະຫວ່າງສອງຄົນ ຫຼື ຫຼາຍກ່ວານັ້ນ ຜ່ານການບໍລການທາງອິນເຕີເນັດ

ຜູ້ກະທຳຜິດ ໝາຍເຖິງ ບຸກຄົນທີກະທຳທີ່ຕັ້ງໃຈ ຫຼື ບໍ່ຕັ້ງໃຈ ທີ່ສ້າງຜົນເສຍທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ ແລະ ສັບຊິນຕໍ່ ເພດຍິງ ແລະ ເດັກ (ອີງຕາມກົດໝາຍວ່າດ້ວຍການປ້ອງກັນ ແລະ ຕໍ່ຕ້ານຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ)

ສື່ສັງຄົມອອນລາຍ ໝາຍເຖິງ ເປັນຄຳເອີ້ນລວມສຳລັບເວບໄຊ້ ແລະ ລະບົບປະຕິບັດການ ເນັ້ນໃສ່ການສື່ສານທາງອິນເຕີເນັດ, ການປ້ອນຂໍ້ມູນໃນຊຸມຊົນ, ການໂຕ້ຕອບ, ການແບ່ງປັນເນື້ອຫາ ແລະ ການຮ່ວມມື ເຊິ່ງ ສື່ສັງຄົມອອນລາຍທີ່ນິຍົມທົ່ວໄປປະອກບມີ ເຟສບຸກ(Facebook), ອິນສະຕາແກຣມ(Instagram), ທະວິດເຕີ (Twister ຫຼື X), ລາຍ (Line) ແລະ ອື່ນໆເປັນຕົ້ນ

ຜູ້ຖືກເຄາະຮ້າຍ ໝາຍເຖິງ ຜູ້ທີ່ຕົກເປັນເຫຍື່ອຂອງພຶດຕິກຳການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດ; ຜູ້ຖືກເຄາະຮ້າຍ ອາດລວມເຖິງຜູ້ລອດຊີວິດຈາກເຫດການຄວາມຮຸນແຮງ, ເຊິ່ງທັງສອງຄຳ (ຜູ້ຖືກເຄາະຮ້າຍ ແລະ ຜູ້ລອດຊີວິດ) ແມ່ນຖືກໃຊ້ຄວບຄູ່ກັນ ເມື່ອອີງຕາມການນຳໃຊ້ຂອງສາກົນ.

ຜູ້ມີສ່ວນຮ່ວມ (Stakeholders) ໝາຍເຖິງ ອົງກອນ ແລະ ໜ່ວຍງານຂອງລັດ ແລະ ພາກສ່ວນສັງຄົມ (ເອກະຊົນ) ທີ່ມີບົດບາດໃນການຕອບໂຕ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນທຸກລະດັບ. ຜູ້ມີສ່ວນຮ່ວມທີ່ສຳຄັນ ຍັງລວມເຖິງຜູ້ເຄາະຮ້າຍ, ກຸ່ມຄົນທີ່ມີລັກສະນະຄ້າຍຄື ແລະ ເປັນເປົ້າໝາຍ, ໜ່ວຍງານບໍລິການສັງຄົມ, ຂະແໜງສາທາລະນະສຸກ, ຜູ້ອອກນະໂຍບາຍ, ຕຳຫຼວດ, ຜູ້ບັງຄັບໃຊ້ກົດໝາຍ, ຜູ້ພິພາກສາ, ໜ່ວຍງານປົກປ້ອງເດັກ, ຂະແໜງການສຶກສາທິການ ແລະ ອື່ນໆ ລວມທັງເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ, ພະນັກງານກົງສຸນ, ແລະ ສູນໃຫ້ຄວາມຊ່ວຍເຫຼືອຄົນອົບພະຍົບ.